ເຣື່ອງນີ້ເປັນເຣື່ອງທີ່ສົມມຸດຂື້ນມາ ອາດຈະຖືກກັບຊີວິດນັກ ອອນລາຍຫຼາຍໆຄົນ. ສຳລັບຈຳປາແດງເອງຍັງບໍ່ທັນເຄີຍພໍ້ເຣື່ອງແນວນີ້ດອກ ເພາະຍັງຕາມຫາຍິງຄົນນັ້ນຢູ່... ນີ້ເປັນສຽງຈົ່ມຈາກຄົນທີ່ເຊົ່າ ອາພາຕຣ໌ແມັນທ໌ ຂ້າງໆຂ້ອຍນີ້ລະ. ເຫັນມັນທັບໂທລະສັພມັນ ຂ້ອຍກໍເລີຍສລອກກອກເຂົ້າໄປຖາມ... ຄວາມຈິງມັນກໍມີແນວນີ້..........................................

## ເສັຽຮັກເມື່ອສັກນ້ອຍກວ່າ

ນັ່ງທຳງານພັດຄຶດພໍ້ ຕອນລໍຮັບຈັບສາຍ
ອ້າຍຈຶ່ງໂທມາຫາ ຫວ່າງບ່າຍວັນເສົານີ້
ຄູຍດິໆບໍ່ພໍດ້ານ ສາວຄົນງາມ Online ຢູ່
ພ້ອມທັງເປີ Yahoo Messenger ຮຸ່ງໄວ້ ຫ້ອງພໍໄດ້ອ່ານຂ່າວຄາວ

ໜ້ອຍໜຶ່ງ Yahoo ເຈົ້າ ມີຜູ້ບ່າວຂຽນ message
ເບັດປາກຟັງສຽເຂົາ ຈຶ່ງບອກເຮົາໃຫ້ເຮັງຮ້ອນ
ໃຫ້ໂຈະຕອນຄຳເວົ້າ ຟ້າວປາກໂທກັບຜູ້ໃໝ່
ນີ້ຄືຄວາມມີໃຈ ຄຶດປາກອາຍນັ່ງເກົ້ ຝັນເລີຍເຜີໄລ່ອອກສາຍ

ນ້ອງເປັນຫຼັງບໍ່ບອກອ້າຍ ວ່າມີໃໝ່ ຄົນສຳຄັນ
ເປັນຫຼັງມາຕົວະກັນ ຢູ່ທຸກວັນແລງເຊົ້າ
ຫຼືວ່າຫຼົງຄວາຍເຖົ້າ ທີ່ມົວເມົາຄ້ຽວຫຍ້າອ່ອນ ແລ້ວບໍ?
ຕົ້ນທີ່ຜູ້ມາກ່ອນ ດວງສມອນບອກຮັກອ້າຍ ບາດໃຈແທ້ພັດຮັກເຂົາ

ໂອ໊ຍ! ອ້າຍປາກຟັງຈາກປາກເຈົ້າ ນ້ອງຕິດບ່າວເຖົ້າຫົວງູ ແລ້ວບໍ?
ແຕ່ວ່າມັນອຶດສູ ຜູ່ທີ່ຄອຍຄຽງໜັ້ນ
ນ້ອງຫຼົງໄຫຼໃຈຝັ້ນ ຈຸດສຳຄັນເຂົາມ່ວນ ຊັ້ນບໍ?
ເຈົ້າເລີຍຫຼົງອອນຊອນ ໃຈອາວອນພ່ຳເພີ້ ເຫຼີແລ້ວບໍ່ຕ່າວຄືນ ບໍ່ນໍ?

ອ້າຍເອງ ພໍປາກດຶງທຶກທິ້ນ ໃຫ້ນ້ອງຕື່ນຄືນກັບ ຈິງແລ້ວ
ຢ້ານນ້ອງໄປລາລັບ ໄຝ່ນັບເງິນຝັນເພີ້
ຈັບມືຖືຄອຍເກົ້ ເຂົາສະເອີະເຜີໃຈໜໍ່ ຊັ້ນບໍ?
ຄຶດຂື້ນມາພໍໆ ປາກເຈາະໃຈຍອດຊູ້ ໃຫ້ມັນຮູ້ເຣື່ອງຈິງ

ຖືກວາງສາຍປະນັ່ງນິ້ງ    ຍິງມີໃໝ່ຄົນສຳຄັນ    ແລ້ວບໍ
ຄຶດຂຶ້ນມາແລ້ວສົງສານ    ອ່ານຕົວເອງຖືກນອງຂ້າມ
ຮັກນິໜານມີສ້ຽນ    ຍ້ອນການຮຽນເຮົາຕ່ຳ    ນີ້ບໍ?
ຖືກຜູ່ສາວມາຢຽບຫຍ່ຳ    ໜຳຄຸຍແຝນໃສ່ໜ້າ    ຖຸລາລົ້ມຈົ່ມປາກຕາຍ    ເສັຽໃຈເດ